| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບທະບຽນວິຊາຊີບເພສັດຊະກຳສຳລັບທຸລະກິດຮ້ານຂາຍຍ່ອຍຢາ ຂັ້ນ 2 |
| **ປະເພດເອກະສານ** | ໃບຢັ້ງຢືນ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 19.11.2020 |
| **ພາກສ່ວນຮັບຜິດຊອບ** | ກົມອາຫານ ແລະ ຢາ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ຜູ້ທີ່ມີໃບປະກາສະນີຍະບັດວິຊາການຢາໃນລະດັບຊັ້ນກາງ. |
| **ເງື່ອນໄຂໃນການຂໍເອກະສານ** | 1. ເປັນຄົນສັນຊາດລາວ ທີ່ມີພູມລຳເນົາຕັ້ງຢູ່ ສປປ ລາວ ຖາວອນບໍ່ຕ່ຳກວ່າ 5 ປີ2. ຄົນຕ່າງດ້າວ ຫຼື<br>ຄົນບໍ່ແມ່ນສັນຊາດລາວທີ່ມີພູມລຳເນົາຕັ້ງຢູ່ ສປປ ລາວ ຖາວອນ,<br>ແຕ່ຕ້ອງໄດ້ຜ່ານລະບົບການຮຽນວິຊາຊີບເພສັດຊະກຳຂອງ ສປປ ລາວ ແລະ<br>ໄດ້ອະນຸມັດຈາກກະຊວງສາທາລະນະສຸກ3. ສຳລັບເພຊັດສະກອນທີ່ສັງກັດລັດ ຫຼື ບໍ່ສັງກັດລັດ<br>ມີສິດເປີດຮ້ານຂາຍຢາ ນອກ ຫຼື ໃນໂມງລັດຖະການໄດ້,<br>ແຕ່ຕ້ອງໄດ້ຜ່ານການຮັບໃຊ້ວຽກງານມາແລ້ວຢ່າງໜ້ອຍ 2 ປີ ສຳລັບເຂດຫ່າງໄກສອກຫຼີກ, 3<br>ປີຂຶ້ນໄປສຳລັບເຂດເທດສະບານ.<br>ສາມາດມີຜູ້ຊ່ວຍທີ່ໄດ້ຮັບອະນຸຍາດຢ່າງເປັນທາງການ4. ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະຖືກດຳເນີນຄະ<br>ຫຼື ປະລະໜ້າທີ່ ຫຼື<br>ຖືກປະຕິບັດວິໄນຍ້ອນຜິດພາດທາງດ້ານວິຊາຊີບເພສັດຊະກຳ5. ຕ້ອງມີສຸຂະພາບແຂງແຮງ<br>ສົມບູນດີ |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ກົດໝາຍວ່າດ້ວຍ ຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) | 07/ສພຊ | 21.12.2011 | |
| ຂໍ້ຕົກລົງວ່າດ້ວຍ ຮ້ານຂາຍຍ່ອຍຢາ (ສະບັບປັບປຸງ) | 2922/ສທ | 21.09.2016 | ມາດຕາ 3, 19.1, 22, 23 |
| ລັດຖະບັນຍັດຂອງປະທານປະເທດ ສປປ ລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ | 003/ປທທ | 26.12.2012 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສໍາລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ | |
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງ (ວັນ)** | 0 | ຢູ່ໃນນິຕິກໍາບໍ່ໄດ້ລະບຸວັນເວລາໃນການພິຈາລະນາ. ການຂໍອະນຸຍາດເປີດຮ້ານຂາຍຢາແຕ່ລະຂັ້ນ ຕ້ອງປະກອບເອກະສານຢ່າງຄົບຖ້ວນຕາມທີ່ກ່າວໄວ້ໃນມາດຕາ 19.1 ແລ້ວນໍາສະເໜີຕໍ່ເຈົ້າໜ້າທີ່ດ້ານຢາທີ່ຂຶ້ນກັບພະແນກສາທາລະນະສຸກແຂວງ, ນະຄອນແຕ່ລະຂັ້ນຕາມລໍາດັບ, ເຈົ້າໜ້າທີ່ດ້ານຢາ ໃນຂັ້ນເມືອງສົມທົບກັບຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຕ້ອງໄດ້ກວດກາສະຖານທີ່ເພື່ອປະເມີນການສະເໜີ ແລະ ສະໜອງຂໍ້ມູນແກ່ກະຊວງສາທາລະນະສຸກເພື່ອພິຈາລະນາ. ສໍາລັບການອອກອະນຸຍາດທະບຽນຮ້ານຂາຍຍ່ອຍຢາຂັ້ນ 2 ແມ່ນກະຊວງສາທາລະນະສຸກ ເປັນຜູ້ອະນຸມັດ. |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກໍານົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນໍາໃຊ້ຈັກເດືອນ?** |
| ມີ | 24 |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ໃບທະບຽນວິຊາຊີບເພສັດຊະກຳມີອາຍຸນຳໃຊ້ 2 ປີ; ຈາກນັ້ນໃນໄລຍະ 3 ເດືອນກ່ອນໃບທະບຽນຈະໝົດອາການນຳໃຊ້ ໃຫ້ປະກອບເອກະສານຂໍຕໍ່ທະບຽນ. (ມາດຕາ 23 ຂໍ້ຕົກລົງວ່າດ້ວຍຮ້ານຂາຍຢາຍ່ອຍຢາ (ສະບັບປັບປຸງ) 2922/ສທ) ເຊິ່ງແມ່ນພະແນກສາທາລະນະສຸກແຂວງ, ນະຄອນເປັນຜູ້ດຳເນີນການເຊັນຕໍ່ທະບຽນ, ກ່ອນການເຊັນຕໍ່ທະບຽນດັ່ງກ່າວຢູ່ຂັ້ນແຂວງ ພະແນກສາທາລະນະສຸກແຂວງ, ນະຄອນ (ຂະແໜງອາຫານ ແລະ ຢາ) ຕ້ອງປະກອບເອກະສານທີ່ກ່ຽວຂ້ອງ ພ້ອມທັງສັງລວມຂໍ້ມູນປະເມີນ ແລ້ວຈຶ່ງສະເໜີຜ່ານກົມອາຫານ ແລະ ຢາ ເພື່ອຄົ້ນຄວ້າ ແລະ ນຳສະເໜີກະຊວງສາທາລະນະສຸກຕົກລົງເສຍກ່ອນ. |

| **ຄ່າທຳນຽມສຳລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 160000.00 | 0.00 | 160000.00 |
| **Comments** | ອີງຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ 003/ປປທ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳນຽມເພີ່ມເຕີມ** | | | | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 80000.00 | 0.00 | 80000.00 |
| **ຄຳເຫັນ** | ອີງຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ 003/ປປທ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳນຽມຕໍ່ອາຍຸເພີ່ມເຕີມ** | | | | |